ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 09 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 15 ຕຸລາ 2024

# ແຈ້ງການ

## ໂຈະການຮັບພິຈາລະນາ ອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1977/ຫສນຍ, ລົງວັນທີ 24 ກັນຍາ 2024;
- ອີງຕາມຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ສະບັບເລກທີ 461/ທຫລ, ລົງວັນທີ 03 ມິຖຸນາ 2019.

ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງພາຍໃນຊາບວ່າ ໃນໄລຍະທີ່ ທຫລ ກຳລັງປັບປຸງນິຕິກຳ ແລະ ນະໂຍບາຍການຄຸ້ມຄອງການ ນຳເຂົ້າ-ສົ່ງອອກຄຳ ທີ່ ທຫລ ຄຸ້ມຄອງເປັນຕົ້ນ ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ສະບັບເລກທີ 461/ທຫລ, ລົງວັນທີ 03 ມິຖຸນາ 2019 ເພື່ອໃຫ້ເໝາະສົມກັບສະພາບການດຳເນີນທຸລະກິດດັ່ງກ່າວໃນປັດຈຸບັນ. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ຈຶ່ງແຈ້ງມາຍັງບັນດາທ່ານ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງພາຍໃນ ສປປ ລາວ ດັ່ງນີ້:

1. ທະນາຄານແຫ່ງ ສປປ ລາວ ໂຈະການຮັບພິຈາລະນາອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳທີ່ສາກົນນຳໃຊ້ເປັນເຄື່ອງມືໃນການຊຳລະລະຫວ່າງປະເທດ ຊົ່ວຄາວຈົນກວ່າຈະສຳເລັດການປັບປຸງນິຕິກຳທີ່ກ່ຽວຂ້ອງ.
2. ສຳລັບນິຕິບຸກຄົນທີ່ໄດ້ຮັບອະນຸຍາດກ່ອນແຈ້ງການສະບັບນີ້ ແມ່ນສາມາດເຄື່ອນໄຫວທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຕາມຂອບເຂດສິດທີ່ໄດ້ຮັບອະນຸຍາດ ຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງຮຽນແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຮັກສາການຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

**ວັດທະນາ ດາລາລອຍ**